ທຄຕລ BCEL
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່ ເລກທີ: 020 /ທຄຕລ.2019

ນະຄອນຫຼວງວຽງຈັນ, ວັນທີ: 19 SEP 2019

**ມະຕິ**

**ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**ກ່ຽວກັບການຈຳໜ່າຍຮຸ້ນ ທຄຕລ ຂ້ອງລັດຖະບານຖືຄອງ**

- ອີງຕາມການເຫັນດີຂອງສະມາຊິກສະພາບໍລິຫານ ທຄຕລ ຜ່ານ ຈົດໝາຍວຽນ ເລກທີ: 019/ສພບ.ທຄຕລ ລົງວັນທີ 18/09/2019.

**ປະທານ ສະພາບໍລິຫານ (ທຄຕລ) ຕົກລົງເຫັນດີ:**

**ມາດຕາ 1:** ຮັບຮອງເອົາບາງບັນຫາສຳຄັນສຳລັບດຳເນີນການຈຳໜ່າຍຮຸ້ນ ທຄຕລ 10% ທີ່ລັດຖະບານຖືຄອງໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປຜ່ານຕະຫຼາດຫຼັກຊັບລາວ ດັ່ງລາຍລະອຽດລຸ່ມນີ້:

1. ຮັບຮອງເອົາ ວັນທີ 04/10/2019 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ (Record Date) ເພື່ອກຳນົດສິດຜູ້ຖືຮຸ້ນເດີມໃນການຊື້ຮຸ້ນທີ່ຈະອອກຈຳໜ່າຍ (RO).
2. ຮັບຮອງອັດຕາສ່ວນ, ວິທີການແບ່ງປັນຮຸ້ນ ທີ່ຈະຈຳໜ່າຍໃຫ້ຜູ້ຖືຮຸ້ນເດີມ (RO) ແລະ ມວນຊົນທົ່ວໄປ (PO):
   - ການຈຳໜ່າຍຮຸ້ນ RO ກຳນົດເອົາອັດຕາສ່ວນ 10:1 ໝາຍຄວາມວ່າ 10 ຮຸ້ນເດີມ ຕໍ່ 1 ຮຸ້ນໃໝ່.
   - ການອອກຈຳໜ່າຍຮຸ້ນ RO ແມ່ນໃຫ້ສິດຜູ້ຖືຮຸ້ນເດີມໃນການຈອງຊື້ພາຍໃນ 5 ວັນ ທຳອິດຂອງໄລຍະເວລາການຂາຍ, ພາຍຫລັງຮຸ້ນ RO ດັ່ງກ່າວຫາກຂາຍບໍ່ໝົດ ແມ່ນໃຫ້ຈັດສັນມາຂາຍໃຫ້ມວນຊົນທົ່ວໄປ ຕາມຮູບແບບ PO, ເຊິ່ງການຈຳໜ່າຍໃນຮູບແບບ PO ແມ່ນນຳໃຊ້ຮູບແບບຈອງຊື້ຮຸ້ນກ່ອນໄດ້ຮັບການແບ່ງປັນກ່ອນ.

**ມາດຕາ 2:** ໃຫ້ ທຄຕລ ແຈ້ງມະຕິຕົກລົງສະບັບນີ້ໃຫ້ບັນດຜູ້ຖືຮຸ້ນ, ສະມາຊິກສະພາບໍລິຫານ, ຄະນະກຳມະການຕ່າງໆ ທີ່ຮັບຜິດຊອບການຈຳໜ່າຍຮຸ້ນ ແລະ ພາກສ່ວນກ່ຽວຂ້ອງອື່ນໆຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດ.

**ມາດຕາ 3:** ມະຕິຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**

ປອ ບຸນເຫຼືອ ສິນໄຊວໍຣະວົງ